ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ກົມປູກຝັງ

ເລກທີ 1222/ກປຝ

ນະຄອນຫຼວງວຽງຈັນ, ວັນທີ 13 JUL 2021

# ແຈ້ງການ

**ເຖິງ:** - ຂະແໜງການປູກຝັງທຸກແຂວງທົ່ວປະເທດ

- ຜູ້ຜະລິດ, ກຸ່ມຜູ້ຜະລິດ, ບັນດາບໍລິສັດ ແລະ ຜູ້ປະກອບການ

**ເລື່ອງ:** ການເກັບຄ່າທຳນຽມ ແລະ ຄ່າບໍລິການວິຊາການຂອງການກວດກາ ແລະ ການຢັ້ງຢືນຕາມມາດຕະຖານກະສິກຳອິນຊີ ແລະ ກະສິກຳທີ່ດີ.

- ອີງຕາມ ລັດຖະບັນຍັດ ຂອງປະທານປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ວ່າດ້ວຍ ຄ່າທຳນຽມ ແລະ ຄ່າບໍລິການ, ສະບັບເລກທີ 002/ປປທ, ລົງວັນທີ 17.06.2021;
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນ ໄຫວ ຂອງກົມປູກຝັງ, ສະບັບເລກທີ 3825/ກປ, ລົງວັນທີ 18 ສິງຫາ 2017;

ເພື່ອເຮັດໃຫ້ ການເກັບຄ່າທຳນຽມ ແລະ ຄ່າບໍລິການວິຊາການ ຂອງການກວດກາ ແລະ ການຢັ້ງຢືນກະສິກຳອິນຊີ ແລະ ກະສິກຳທີ່ດີ ໃຫ້ສອດຄ່ອງຕາມລະບຽບຫຼັກການ ທີ່ກຳນົດໄວ້ ໃນລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 002/ປປທ, ລົງວັນທີ 17.06.2021 ແລະ ເປັນເອກະພາບ ໃນການຂຶ້ນແຜນງົບປະມານໃນການລົງກວດກາ ແລະ ການຢັ້ງຢືນ, ກົມປູກຝັງ ຈຶ່ງອອກແຈ້ງການ ກ່ຽວກັບການກຳນົດຄ່າທຳນຽມ ແລະ ຄ່າບໍລິການວິຊາການ ຂອງການກວດກາ ແລະ ການຢັ້ງຢືນ ດັ່ງນີ້:

1. ຄ່າທຳນຽມການອອກໃບຢັ້ງຢືນກະສິກຳອິນຊີ ແລະ ກະສິກຳທີ່ດີ ໃຫ້ເກັບດັ່ງນີ້:

| ລ/ດ | ລາຍການ | ຫົວໜ່ວຍ | ອັດຕາ (ກີບ) |
|---|---|---|---|
| 1.1 | ໃບຢັ້ງຢືນມາດຕະຖານກະສິກຳອິນຊີ ແລະ ມາດຕະຖານກະສິກຳທີ່ດີ (ສະໝັກໃໝ່) | ໃບ | 50,000 |
| 1.2 | ໃບຢັ້ງຢືນຂໍຕໍ່ອາຍຸມາດຕະຖານກະສິກຳອິນຊີ ແລະ ມາດຕະຖານກະສິກຳທີ່ດີ | ໃບ | 50,000 |
| 1.3 | ໃບຢັ້ງຢືນຝຸ່ນອິນຊີ ທີ່ໃຊ້ໃນພື້ນທີ່ຂໍການຢັ້ງຢືນຕາມມາດຕະຖານກະສິກຳອິນຊີ | ໃບ | 50,000 |



สแกนด้วย CamScanner

2. ຄ່າບໍລິການກວດກາກິດຈະການກະສິກຳອິນຊີ ແລະ ກະສິກຳທີ່ດີ ພ້ອມໃບຢັ້ງຢືນ ໃຫ້ເກັບດັ່ງນີ້:

| ລ/ດ | ລາຍການ | ຫົວໜ່ວຍ | ອັດຕາ (ກີບ) |
|---|---|---|---|
| 1.1 | ສັງລວມ, ຄົ້ນຄວ້າ ແລະ ປະເມີນຜົນ ແລະ ກະກຽມເອກະສານ ເພື່ອລົງກວດກາພື້ນທີ່ | ຄັ້ງ | 250,000 |
| 1.2 | ສັງລວມ, ຄົ້ນຄວ້າ ແລະ ປະເມີນ ແລະ ຂຽນບົດລາຍງານສະເໜີຕໍ່ຄະນະກຳມະການພິຈາລະນາອອກໃບຢັ້ງຢືນ | ຄັ້ງ | 250,000 |
| 1.3 | ການລົງກວດກາພື້ນທີ່ການຜະລິດ ແລະ ຜູ້ປະກອບການຕາມມາດຕະຖານກະສິກຳທີ່ດີ (GAP) ແລະ ມາດຕະຖານກະສິກຳອິນຊີ (OA) | ວັນ/ຄົນ | 250,000 |

3. ຄ່າໃຊ້ຈ່າຍໃນການເດີນທາງ, ອັດຕາກິນຢູ່ພັກເຊົາ ແມ່ນບໍ່ລວມໃນຄ່າທຳນຽມ ແລະ ຄ່າບໍລິການ, ພະແນກມາດຕະຖານ, ກົມປູກຝັງ ແມ່ນຈະມີການຄິດໄລ່ຕາມຕົວຈິງໃນມື້ລົງເຮັດວຽກ ໂດຍອີງຕາມຂໍ້ຕົກລົງວ່າດ້ວຍກຳນົດໝາຍການໃຊ້ຈ່າຍງົບປະມານບໍລິຫານຂອງລັດ, ສະບັບເລກທີ 4000/ກງ, ລົງວັນທີ 12 ທັນວາ 2018.

4. ສຳລັບວິທີການຄິດໄລ່ແຜນການລົງກວດກາ, ວິທີການກຳນົດຈຳນວນສະມາຊິກກຸ່ມ ຫຼື ໂຄງການ ແມ່ນພະແນກມາດຕະຖານ ຈະດຳເນີນການຄິດໄລ່ ຕາມຂະບວນການຢັ້ງຢືນຕາມມາດຕະຖານກະສິກຳອິນຊີ ແລະ ກະສິກຳທີ່ດີ.

ດັ່ງນັ້ນ, ຈຶ່ງແຈ້ງການມາຍັງ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

ຫົວໜ້າກົມປູກຝັງ

ກະຊວງກະສິກຳ ແລະ ປ່າໄມ້ ກົມປູກຝັງ

ຈັນທາ ທິບພະວົງພັນ

ບ່ອນສົ່ງ

- ພະແນກມາດຕະຖານ 1 ສະບັບ (ເພື່ອຊາບ ແລະ ຈັດຕັ້ງປະຕິບັດ)
- ພະແນກ ແຜນການ ແລະ ຮ່ວມມື 1 ສະບັບ (ເພື່ອຊາບ)
- ພະແນກບໍລິຫານ ແລະ ຈັດຕັ້ງ 1 ສະບັບ (ເພື່ອຊາບ)
- ຂະແໜງປູກຝັງທົ່ວປະເທດ 1 ສະບັບ (ເພື່ອຊາບ)



สแกนด้วย CamScanner